# ສົ່ງທ້າຍປີເກົ່າ ອວຍພອນປີໃໝ່

ຂໍໃຫ້ທຸກຕົນທຸກຄົນໄດ້ຊີວິດໃໝ່ ໄດ້ຊີວິດປະເສີດເລີດຍິ່ງ, ຊີວິດປະເສີດຂໍໃຫ້ມີຂຶ້ນ ເກີດຂຶ້ນໃນວັນປີໃໝ່, 31 ເຄິ່ງໜຶ່ງ ທີ 1 ເຄິ່ງໜຶ່ງ, ສ່ວນບໍ່ດີ ຂໍໃຫ້ຕົກອອກໄປ ໃນວັນເກົ່າ ປີເກົ່າ, ສ່ວນດີ ຂໍຈົ່ງເກີດຂຶ້ນ ເກີດຂຶ້ນກັບທຸກຕົນທຸກຄົນ ຢູ່ໃນໂລກໜ່ວຍນີ້ ທັງເໝີດນໍາກັນ, ບຸນອັນໃດທີ່ພໍ່ພຣະແມ່ພຣະມີ ຂໍຈົ່ງນໍາຊ່ວຍນໍາໄປຊ່ວຍໃຫ້ຮອດໃຫ້ເຖິງ ໃຫ້ເໝີດທຸກຕົນທຸກຄົນ ໃນໂລກໜ່ວຍນີ້, ຜູ່ຍັງມີຊີວິດຢູ່ ທັງຜູ່ຍັງເຫຼືອແຕ່ວິນຍານ ຂໍໃຫ້ຫຼຸດໃຫ້ພົ້ນນໍາກັນ ພົ້ນດ້ວຍຜົນບຸນເກົ່າຊ່ວຍ ພົ້ນດ້ວຍຜົນບຸນໃໝ່ຊ່ວຍ, ວັນນີ້ ຍັງເປັນວັນປີເກົ່າ ຍັງຢູ່ໃນເດືອນເກົ່າ ແຕ່ຈະຜ່ານໄປແລ້ວ ຍັງອີກບໍ່ພໍເທົ່າໃດຊົ່ວໂມງ ກໍຈະເຖິງປີໃໝ່ ວັນໃໝ່ ຂໍໃຫ້ທາຍາດທັງຫຼາຍ ສົ່ງທ້າຍປີເກົ່າ ສົ່ງຄວາມເສັຍອົກເສັຍໃຈອອກ! ສົ່ງຄວາມເຈັບຊໍ້າອອກ! ຄວາມທຸກຂ໌ກໍ້າກືນທັງຫຼາຍທັງປວງ ຂໍຈົ່ງສົ່ງອອກໃຫ້ໝົດ! ຢ່າໃຫ້ເຫຼືອໃຫ້ຄ້າງ! ຢ່າປະໄວ້! ຊີວິດເກົ່າເຄີຍເຜົາໄໝ້ ເຄີຍເສັຍອົກເສັຍໃຈ ເຄີຍຫຼັ່ງນໍ້າຕາ ເຄີຍຮັກຈົນທຸກຂ໌ ເຄີຍຊັງຈົນທຸກຂ໌ ເຄີຍຢາກໄດ້ຈົນລໍາບາກ ເຄີຍຄິດກັງວົນ ເຄີຍຢ້ານ ເຄີຍໜັກອົກໜັກໃຈ ເຄີຍຄິດໄປຕ່າງໆ ນາໆ ເຄີຍປາກເຄີຍເວົ້າ ເຄີຍເວົ້າເຈົ້າເວົ້າຂ້ອຍເວົ້ານັ້ນເວົ້ານີ້ ເວົ້າໃນສິ່ງທີ່ບໍ່ດີ ບໍ່ເໝາະບໍ່ຄວນ ຈົ່ງສະຫຼະອອກ, ປີໃໝ່ ໃກ້ຈະມາເຖິງແລ້ວ ຂໍໃຫ້ທຸກຕົນທຸກຄົນ ຈົ່ງຕັ້ງໃຈຮັບເອົາສິ່ງດີໆ ເຂົ້າມາໃນຊີວິດ, ທັງຄວາມຄິດກໍຂໍໃຫ້ດີ, ຄວາມເວົ້າກໍຂໍໃຫ້ດີ ການກະທໍາກໍຂໍໃຫ້ດີ ແລ້ວກໍຂໍໃຫ້ຮັກກັນແພງກັນ ເມດຕາສົງສານກັນ, ຂອງບໍ່ດີ ຈົ່ງສົ່ງຄືນໃຫ້ທັມມະຊາດທັມມະຊາດໂລກໜ່ວຍນີ້, ໃຫ້ຮັບເອົາແຕ່ຂອງດີເຂົ້າມາ! ບໍ່ດີ ສະຫຼະອອກ! ດີ ຮັກສາໄວ້! ປີໃໝ່ຈົ່ງຈະໂຊກດີ ໂຊກດີຕະຫຼອດໄປ! ຊີວິດໃໝ່ເຂົ້າມາປະຄອງໃຈ ປະຄອງກາຍ ກາຍໃຈກໍຈະມີແຕ່ຄວາມສຸຂ ທຸກຕົນທຸກຄົນຢູ່ໃນໂລກໜ່ວຍນີ້ ກໍຈະພອຍໄດ້ຮັບຜົນສຸຂ ພອຍໄປດ້ວຍ, ສຸຂອັນໃດ ບໍ່ເທົ່າເຮົາຮັກກັນ ດ້ວຍຄວາມເມດຕາສົງສານ, ສຸຂບໍ່ຢ້ານກັນລື່ນເຫຼືອ, ສຸຂເພື່ອແຜ່ ສຸຂຮູ້ຄ່າຮູ້ຄຸນກັນ, ສຸຂມັກສ້າງສາ ສຸຂຍ້ອນມັກພັດທະນາ, ສຸຂຖືກກອບຖືກກົດ ສຸຂອົດສຸຂທົນ ຈົນໃຫ້ເຈົ້າຂອງເຢັນ, ສຸຂເປັນບຸນ ສຸຂເປັນກຸສົນ ເປັນມະຫາກຸສົນ, ຂໍໃຫ້ທຸກຄົນໄດ້ຮັບ ຮັບນໍາກັນ, ສຸຂສິ່ງນີ້ ມີຢູ່ໃນພຣະພຸທທະສາສນາ, ສຸຂຈາຄະໄດ້, ສຸຂເສັຍສະຫຼະໄດ້ ສຸຂເອື້ອເຟື້ອເພື່ອແຜ່, ຜົນທັງຫຼາຍນີ້ ຈະຕອບສະໜອງຄືນ.

ຂໍໃຫ້ທຸກຄົນ ທຸກໆ ຄົນ ຈົ່ງມີການສ້າງ ຈົ່ງມີການພັດທະນາເອົາ, ພັດທະນາເອົາເອງ, ຮັກ ຫ່ວງ ຫຶງຫວງ ໃຫ້ມີ ແຕ່ຂໍໃຫ້ມີໜ້ອຍ! ຮັກແທ້ ຮັກຈິງ ຂໍໃຫ້ມີເຕັມຫົວໃຈ, ຮັກໂອບເອື້ອອາລີ ຂໍໃຫ້ມີເຕັມໂລກໜ່ວຍນີ້, ຄວາມເມດຕາຂອງແມ່ພຣະ ຮູ້ຈາຄະສະຫຼະໄດ້ ຢາກໃຫ້ມີຢູ່ກັບທຸກຄົນ ໃນໂລກໜ່ວຍນີ້, ຢາກໃຫ້ມີຢ່າງເຕັມໆ, ມີແລ້ວ ຈະມີແຕ່ສຸຂ, ເຖິງຈະມີທຸກຂ໌ ມາກມາຍຫຼາຍພຽງໃດ ຄວາມທຸກຂ໌ ກໍບໍ່ສາມາດທັບເຕັງເອົາໄດ້, ທຸກຂ໌ທັງຫຼາຍທັງປວງ ເຮົາຕ້ອງສູ້ ສູ້ໃຫ້ຜ່ານ, ໃນເມື່ອຜ່ານໄດ້ແລ້ວ ເຮົາຈົ່ງຈະຮູ້ເອງ, ຮູ້ໄດ້ວ່າ ມັຄຜົນມີຈິງ, ສິ່ງທີ່ເຮົາເຮັດເຮົາທໍາ ສິ່ງທີ່ເຮົາເວົ້າເຮົາຄິດ ສິ່ງທີ່ເຮົາຕໍ່ເຕີມເສີມສ້າງ ສິ່ງທີ່ເຮົາລ້າງເຮົາຜັດ ເຮົາຈັດສັນ ເຮົາພັດທະນາ ເຮົາສາມາດໄດ້ຮັບຜົນທັງເໝີດ, ເຮົາເອງເປັນຜູ່ທໍາໃຫ້ເຮົາເອງພົ້ນ ເຮົາເອງເປັນຜູ່ຊ່ວຍເຮົາເອງ ເຮົາສາມາດຊ່ວຍເຮົາໄດ້ ເຮົາທຸກຄົນຢູ່ໃນໂລກໜ່ວຍນີ້ ຢູ່ໃນໂລກໜ່ວຍ

ດຽວກັນນີ້ ເຕັມໄປດ້ວຍຄວາມໂອບເອື້ອອາທອນ ຂອງທັມມະຊາດ, ທັມມະຊາດໂລກໜ່ວຍນີ້ ທຸກຄົນມີສິດໄດ້ ໄດ້ຂອງຂວັນຈາກທັມມະຊາດ ທັມມະຊາດຄອຍມອບໃຫ້.

ຂໍໃຫ້ທຸກຄົນ ຈົ່ງຍິນດີເສີມສ້າງ! ສ້າງສາພັດທະນາ! ສ້າງກາຍ, ສ້າງວາຈາ, ສ້າງໃຈ ສ້າງໃນວັນທີ 1 ເລີ້ມຕົ້ນໄປ ຈົນໄປຮອດຊົ່ວກາລະນານ. ສ້າງເຖີດ ສ້າງນຳກັນເຖີດ! ຊາວລາວຊວນສ້າງ ຄົນລາວຊວນສ້າງ, ແມ່ພຣະຊວນສ້າງ ສ້າງນຳກັນເຖີດ! ສ້າງຄຸນງາມ ສ້າງຄວາມດີ, ສ້າງສິ່ງດີໆ ໃສ່ຊີວິດ, ສ້າງຄວາມຮູ້ສຶກ ສ້າງຄວາມນຶກຄິດໃໝ່, ສ້າງດ້ວຍຄວາມລະນຶກ ສ້າງດ້ວຍຄວາມຮູ້ສຶກຕົວ, ສ້າງດ້ວຍການພິນິດ ສ້າງດ້ວຍການພິຈາລະນາ, ສ້າງສະຕິສຳປະຊັນຍະ, ສ້າງວັນນີ້ ຈະໄດ້ອາສັຍໃນວັນໜ້າ ແລະ ວັນຕໍ່ໄປ, ສ້າງພຣະຜູ່ປະຄອງໃຈ.

ຂໍໃຫ້ທຸກຕົນທຸກຄົນ ຈົ່ງຍິນດີສ້າງພຣະຢູ່ທີ່ກາຍເຈົ້າຂອງ, ສ້າງເຈົ້າຂອງໃຫ້ເປັນພຣະ ສ້າງພຣະຢູ່ໃນກາຍເຈົ້າຂອງ, ສ້າງເຖີດ! ຟ້າວສ້າງນຳກັນເຖີດ! ແມ່ພຣະຈະພາສ້າງ.

ວັນທີ 31 ທັນວາ 2015, ເວລາ 14:28-15:07 ໂມງ. ໃຊ້ເວລາສົ່ງອອກ ແລະ ຈົດຂຽນໄວ້ 39 ນາທີ

**ຜູ່ຮັບຈົດຂຽນໄວ້ ແລະ ຕີພິມ ທ່ານ ຄຳສອນ ຫຼັກໄມຕຣີ,**

ໂທລະສັບ **(856-20) 222 111 40,**

E-mail: klakmaitry@gmail.com;